## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 27 ກໍຣະກະດາ 2008 (07-27-2008)

# ສວັນທີ່ແທ້ຈິງເປັນແນວໃດ?

**ຄໍາຖາມແຫ່ງຊີວິດ:** ເມືອງສວັນຈະເປັນໃນລັກສະນະໃດ ?

**ຂໍ້ພຣະຄັມພີໃນບົດຮຽນ:** ພຣະນິມິດ 21:1-5,22-27,22:1-5

**ພຣະຄັມພີແຫ່ງຄວາມຈິງ:** ສວັນເຕັມໄປດ້ວຍສະງ່າຣາສີຂອງການປາກົດຕົວຂອງພຣະເຢຊູຄຣິດແລະພຣະພອນຂອງພຣະເຈົ້າປາສຈາກບັນຫາຕ່າງໆທີ່ມີຢູ່ໃນໂລກປັດຈຸບັນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ຈະຊ່ວຍໃຫ້ທ່ານດໍາເນີນຊີວິດດ້ວຍຄວາມໝັ້ນໃຈໂດຍ.

* ສະແດງໃຫ້ເຫັນຄວາມແຕກຕ່າງ,ຕາມທັມມະດາຂອງຄວາມເຂົ້າໃຈຜິດລະຫວ່າງສວັນda[l;aomujrq[gsao.orit ຄຣິສຕະທັມຄັມພີ. ສໍາລັບພຣະເຈົ້າພຣະອົງໄດ້ສະແດງໃຫ້ເຫັນເຖິງຄວາມຫວັງອັນຄົບບໍຣິບູນຂອງສວັນ.

## ສວັນທີ່ແທ້ຈິງເປັນຢ່າງໃດ ?

ຍັງມີໝູ່ເພື່ອນຫຼາຍໆຄົນທີ່ສົນທະນາພາທີກັນກຽວກັບໝູ່ຄູ່ຜູ້ທີ່ຮັກແພງທີ່ໄດ້ລ່ວງລັບໄປແລ້ວນັ້ນ(ຕາຍໄປ)ວ່າ: ພວກເຂົາເຫຼົ່ານັ້ນກໍາລັງພາກັນເຮັດຫຍັງນໍໃນສວັນ.ມີຜູ້ນື່ງວ່າເພື່ອນຂອງລາວອາດຈະນັ່ງຊິດເບັດຢູ່. ພ້ອມກັບໃນເວລາດຽວກັນ ເພື່ອນອີກຄົນນື່ງກໍເວົ້າວ່າ ລາວກໍາລັງກິນໝາກກ້ວຍຢູ່. ຄວາມຈິງຂອງສວັນແລະນະຮົກແມ່ນໄດ້ເຕືອນພວກເຮົາທີ່ມັກເວົ້າເຖິງຄວາມສນຸກສນານກ່ຽວກັບພວກເຂົາເຫຼົ່ານັ້ນ. ການຫາປາແລະກິນໝາກກ້ວຍຫອມບໍ່ມີບັນທຶກໄວ້ແລະປາກົດໃນຂໍ້ໃດຂໍ້ນື່ງຂອງພຣະຄັມພີ. ແຕ່ນັ້ນແມ່ນການຜິດພາດໃນການຄິດແລະເວົ້າສນຸກສນານແບບຜິດໆ.

ນີ້ແມ່ນສິ່ງຈະເກີດຂື້ນຢ່າງແທ້ຈິງ. ສວັນແມ່ນສູນກາງປົກຄອງຂອງອົງພຣະເຢຊູຄຣິດ. ໃນບົດຮຽນນີ້ຈະບອກຄວາມຊັດແຈ້ງໃຫ້ທ່ານເຂົ້າໃຈແນ່ຊັດວ່າອົງພຣະເຢຊູຄຣິດຈະຊົງເປີດເຜີຍຄວາມຈິງທຸກຢ່າງໃນພຣະຄັມພີພຣະນິມິດກ່ຽວກັບຄວາມງົດງາມຢ່າງມະຫັສຈັນຂອງສວັນແລະກໍສະແດງໃຫ້ເຫັນຄວາມຮັ່ງມີຫຼືບໍາເນັດທີ່ຈະມີມາໃນພາຍຂ້າງໜ້າຂອງຜູ້ທີ່ເຊື່ອແລະໄວ້ວາງໃຈໃນພຣະເຢຊູຄຣິດ.

## ສຶກສາພຣະຄັມພີ

### 1. ທ້ອງຟ້າ(ສວັນ)ໃໝ່: (ພຣະນິມິດ 21:1-5)

ທ່ານມີຄວາມຄິດເຫັນແລະພິຈາຣະນາເບິ່ງບໍ່ວ່າສວັນທີ່ແທ້ຈິງນັ້ນຈະມີຮູບລັກສະນະແນວໃດ? ຜູ້ອາວຸໂສທ່ານນື່ງໄດ້ເທສນາກັບສະມາຊິກໂບດຂອງທ່ານວ່າພວກທ່ານໄດ້ປັ່ງຮາກຍຶດຕິດສນິດກັບໂລກນີ້ຈົນເກີນໄປ. ທ່ານບອກວ່າ "ໂລກມັນຈະພິນາດໄປ" ໃນວັນທີ່ພຣະເຢຊູສະເດັດກັບມາແລະນັ້ນກໍຈະເປັນຄວາມຈິງ (2 ເປໂຕ3:10) ທ່ານໄດ້ເຕືອນສະຕິພວກເຮົາໃຫ້ຮູ້ວ່າໂລກແລະສວັນຈະຖືກເຜົາໄໝ້ດ້ວຍໄຟຂອງອົງພຣະຜູ້ເປັນເຈົ້າ ແລະທີ່ສຸດປາຍນັ້ນກໍຈະມີການພິພາກສາເກີດຂື້ນ. "ຄໍາຖາມ" ທ່ານມີຄວາມຄິດເຫັນແນວໃດ? ເມື່ອທ່ານຫາກຮູ້ວ່າໂລກນີ້ມີຢູ່ພຽງຊົ່ວຄາວ ຟ້າສວັນໃໝ່ແລະແຜ່ນດິນໂລກໃໝ່ກໍຈະຖືກສ້າງຂື້ນມາໃໝ່. ຄວາມຍຸດຕິທັມກໍມາຕັ້ງຢູ່ເຊັ່ນດຽວກັນ(ຂໍ້13)"

ທ່ານໂຢຮັນໄດ້ພັນລະນາເຖິງຟ້າສວັນໃໝ່ແລະແຜ່ນດິນໂລກໃໝ່. ນັບຕັ້ງແຕ່ນັ້ນມາພວກຜູ້ທໍານວາຍໄດ້ບອກໃຫ້ຮູ້ລ່ວງໜ້າວ່າພື້ນແຜ່ນມະຫາສມຸດນັ້ນຄືທີ່ຢູ່ອາສັຍຂອງພຍາມານ. ນີ້ແມ່ນຄົ້ນທີ່ໃຫຍ່, ແຕ່ຄວາມຍຸດຕິທັມຈະປົກ

ຄຸນທຸກສິ່ງຕາມທັສນະນິສັຍ ແລະການແປຄວາມໝາຍຂອງນະຄອນສັກສິດ, ເມືອງເຢຣູຊາເລັມໃຫມ່, ແມ່ນກໍ່ໃຫ້ເກີດມີການອະທິບາຍໃຫ້ແຈ່ມແຈ້ງຂື້ນ. ເພື່ອການເຫັນພ້ອມຈະມີມາໃນຫຼາຍຮູບແບບ ທັງເປັນສິ່ງກີດກັນຕົວທ່ານບໍ່ໃຫ້ເຫັນພຣະເຈົ້າຢ່າງແຈ່ມແຈ້ງໃນຊີວິດຂອງທ່ານ. ເປັນຕົ້ນຕໍທີ່ໃຫ້ພວກເຂົາເຫັນພ້ອມ ແມ່ນເມືອງເຢຣູຊາເລັມໃຫມ່ທີ່ເລື່ອນລອຍລົງມາຈາກສວັນແລະຈາກພຣະເຈົ້າ, ດ້ວຍຄວາມຕາຍຫຼືການກັບມາຂອງພຣະເຢຊູຄຣິດ. ຜູ້ທີ່ຕິດຕາມພຣະອົງຈະໄປຢູ່ຕໍ່ຫນ້າພຣະພັກຂອງພຣະອົງ ແຕ່ໃນວາຣະສຸດທ້າຍຂອງການໄຖ່ນັ້ນໃຫ້ອາດພາບເບິ່ງໃນຄໍາເວົ້າ. ອົງພຣະຜູ້ເປັນເຈົ້າຄືພຣະເຢຊູໄດ້ເວົ້າຕໍ່ຜູ້ທີ່ຕິດຕາມພຣະອົງວ່າ "ເຮົາຈະໄປຈາກພວກເຈົ້າເພື່ອໄປຈັດແຈງສະຖານທີ່ໄວ້ສໍາລັບພວກເຈົ້າ" ພຣະອົງໄດ້ບອກເຖິງຈຸດປະສົງຂອງພຣະອົງວ່າ "ເຮົາຢູ່ທີ່ໃດພວກທ່ານກໍຈະຢູ່ທີ່ນັ້ນດ້ວຍເຫມືອນກັນ (ໂຢຮັນ 14:2-3).

ພຣະເຈົ້າແມ່ນຢູ່ກັບໄພ່ພົນຂອງພຣະອົງ. ເຈົ້າສາວກໍເຊັ່ນດຽວກັນມີຄວາມຊົມຊື່ນກັບສາມີຂອງຕົນ. ຄວາມຊົມຊື່ນຍິນດີຂອງສວັນແມ່ນການດໍາລົງຢູ່ຕລອດໄປເປັນນິດ.

## ໒. <u>ສະຫງ່າຣາສີ</u> (ພຣະນິມິດ 21:22-27)

ຄວາມສໍາຄັນຂອງການຕິດຕາມພຣະຄັມພີແມ່ນການສະແດງໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງຟ້າສວັນແລະປະສົບການທັງຫມົດຂອງຊີວິດເທິງການສາບແຊ່ງແລະຄວາມພິນາດທັງສິ້ນຂອງໂລກ. ພຣະສະຫງ່າຣາສີຂອງພຣະເຈົ້າແມ່ນເປັນການສະແດງເຖິງການສະເດັດມາຂອງພຣະເຈົ້າອົງເປັນພຣະເຈົ້າ ແລະພຣະເມສານ້ອຍຜູ້ຊົງຣິດທານຸພາບສູງສຸດ, ຜູ້ຮັບປະກັນຄວາມປອດພັຍຫຼືເປັນແສງສະຫວ່າງຂອງນະຄອນນັ້ນ. ນະຄອນສວັນແມ່ນເປັນທີ່ປະທັບຂອງອົງພຣະຜູ້ເປັນເຈົ້າຄືພຣະອົງຊົງຣິດທານຸພາບແລະພຣະເມສານ້ອຍຊົງເປັນພຣະວິຫານໃນນະຄອນນັ້ນ. ບັນດາປະຊາຊາດແລະບັນດາກະສັດໃນແຜ່ນດິນໂລກໄດ້ສະແດງໃຫ້ເຫັນວ່າຟ້າສວັນຄືບ້ານຢູ່ຂອງເຮົາທຸກຄົນຜູ້ທີ່ຊົງຖືກໄຖ່ໄວ້ແລ້ວ. ທຸກຄົນທີ່ຮັກສາກິຈການຂອງພຣະອົງເປັນຜູ້ມີຊັຍຊະນະ(ພຣະນິມິດ 2:26,5:10, 2 ຕີໂມທຽວ2:12) ແລະໃນເວລານີ້ພວກເຮົາກໍຮ່ວມຮັບສະຫງ່າຣາສີຂອງພຣະອົງ.

ໂດຍການຮ່ວມແຮງຮ່ວມໃຈແລະເປັນອັນນຶ່ງອັນດຽວກັນໃນອົງພຣະຄຣິດ. ການອ້າງອີງເຖິງຂອງທ່ານໂຢຮັນວ່າເຫຼົ່າບັນດາປະຊາຊາດຂອງພຣະເຈົ້າຄວນທີ່ຈະຊີ້ແຈງໃຫ້ເຫັນວ່າ ພວກເຮົາບໍ່ຫລົງລືມຕົວຂອງພວກເຮົາເອງ ເຮົາແມ່ນບັນດາປະຊາຊາດທີ່ມີບ່ອນຢູ່ອັນຖາວອນ. ຄວາມແຕກຕ່າງຂອງພວກເຮົາພຽງແຕ່ເພີ່ມເຂົ້າໃນສະຫງ່າຣາສີຂອງນະຄອນສັກສິດເທົ່ານັ້ນ. ການແຍກຢູ່ຢ່າງໂດດດ່ຽວ, ການຕໍ່ສູ້ແຂ່ງຂັນແລະຄວາມບໍ່ຍຸດຕິທັມດັ່ງນີ້ມັນເປັນປົກກະຕິຂອງໂລກ.(ຂໍ້27) ໂດຍການຮັບປະກັນຢ່າງໜັກແໜ້ນວ່າໃນສວັນນັ້ນແມ່ນປາສຈາກສິ່ງຊົ່ວມົວໝອງ ຫຼືການຫຼອກລວງແລະການບໍ່ໂຄຣົບຕໍ່ອົງພຣະຜູ້ເປັນເຈົ້າ. ສະຫງ່າຣາສີຂອງພຣະເຈົ້າໃນສວັນ ແມ່ນຖືກນໍາພາໂດຍບັນດາປະຊາຊາດນານາປະເທດ, ສົມຄວນທີ່ຈະເປັນການຫນູນໃຈກັບຜູ້ທີ່ເຊື່ອໃຫ້ອະທິຖານຫຼືອ້ອນວອນເພື່ອຜູ້ປະກາດຂ່າວປະເສີດ ທີ່ນໍາຂ່າວດີນີ້ໄປສູ່ທຸກຊອກທຸກມຸມຂອງໂລກນີ້ . ສວັນບໍ່ແມ່ນສະຖານທີ່ສະບາຍທໍາໃຫ້ຕື່ນເຕັ້ນ ຫຼື ເປັນພຽງວັດທະນະທັມຮິດຄອງ ແຕ່ແມ່ນເພື່ອທຸກໆຄົນຜູ້ທີ່ມີລາຍຊື່ບັນທຶກໄວ້ໃນປື້ມທະບຽນແຫ່ງຊີວິດຂອງພຣະເມສານ້ອຍ. ແມ່ນຫຍັງເປັນສິ່ງຄໍ້າປະກັນທ່ານວ່າຊື່ຂອງທ່ານນັ້ນຖືກຈົດເຂົ້າໃນທະບຽນແຫ່ງຊີວິດຂອງພຣະເມສານ້ອຍແລ້ວ? ອົງການນານາຊາດແລະການເຜີຍແຜ່ຂ່າວປະເສີດຂອງອະເມຣິກາເໜືອ ແມ່ນເພື່ອນໍາເອົາສະຫງ່າຣາສີຂອງພຣະເຈົ້າ ແລະເພື່ອບຸກຄົນສໍາຄັນຂອງພວກເຮົາທີ່ໃຫ້ການອະທິຖານອ້ອນວອນແລະອອກໄປ. ການພົວພັນອີກອັນນຶ່ງຄືການເປັນພຍານໃນຄຣິສຕະຈັກ. ມີເພື່ອນຂອງສິດຍາພິບານໄດ້ບອກວ່າບໍ່ໃຫ້ເຮົາເປັນພຍານໃນເຂດທີ່ບໍ່ເຫມາະສົມ ຍ້ອນເຫດຜົນອັນໃດເຫດຜົນກໍແມ່ນພວກເຂົາບໍ່ໄດ້ມີຄວາມເຊື່ອຄືເຮົາ. ເປັນໜ້າອັບອາຍແທ້ ທີ່ບໍ່ເຊື່ອຟັງພຣະເຈົ້າ, ບໍ່ເປັນຕາເຊື່ອທຸກຊາດທຸກຊົນເຜົ່າຈະໄດ້ໄປສວັນ. ສະຫງ່າຣາສີຂອງພຣະເຈົ້າທຸກຊາດທຸກຊົນເຜົ່າບໍ່ວ່າຮັ່ງຫຼືຈົນຈະໃຫຍ່ຫຼືຈະນ້ອຍຈະມີຄວາມຮູ້ຫຼືຄົນທັມມະດາ ຈະມີຊື່ຢູ່ໃນທະບຽນແຫ່ງຊີວິດຂອງພຣະເມສານ້ອຍ. ຖ້າຖືກບັນທຶກໄວ້ແລ້ວ ເຂົາກໍຈະໄດ້ຢູ່ໃນການບັນທຶກຂອງຄຣິສຕະຈັກຂອງເຮົາເຫມືອນກັນ.

**3. ຄວາມຊື່ນຊື່ນຍິນດີ** (ພຣະນິມິດ 22:1-5)

ເຮົາຈະເຫັນໄດ້ງ່າຍທີ່ສຸດໃນຂໍ້ພຣະທັມຂອງພຣະເຈົ້າຕໍ່ໄປນີ້ທີ່ຈະເຈາະຈົງໃສ່ກ່ຽວກັບພຣະຣາຊບັນລັງ, ບໍ່ພຽງແຕ່ຣາຊບັນລັງຂອງພຣະເຈົ້າເທົ່ານັ້ນແຕ່ມີຢູ່ສອງສິ່ງທີ່ເຮົາຈະເວົ້າເຖິງ ພຣະຣາຊບັນລັງຂອງພຣະເຈົ້າແລະຂອງພຣະເມສານ້ອຍ, ການຖວາຍຕົວຂອງພຣະເຢຊູຄຣິດແມ່ນເປັນທີ່ຍົກຍ້ອງຕລອດໄປໃນບັນລັງຂອງພຣະອົງ.(ຟີລິບປອຍ 2: 9-11) ພຣະເຢຊູຄຣິດແມ່ນມີຊັຍຊະນະແລະພິສູດໃຫ້ເຮົາເຫັນວ່າຊັຍຊະນະຂອງພຣະຄຣິດແມ່ນມີຢູ່ເປັນນິດ. ໃນທຳນອງໃດທີ່ທ່ານຮັບໃຊ້ພຣະເຈົ້າ ແມ່ນ້ຳແຫ່ງຊີວິດໄດ້ໄຫຼອອກມາຈາກພຣະຣາຊບັນລັງນັ້ນ ເປັນເຫດໃຫ້ຕົ້ນໄມ້ແຫ່ງຊີວິດເກີດຜົນໄດ້ທຸກເວລາ. ຜົນຂອງມັນມີຢູ່ 12 ຢ່າງແລະເປັນຢູ່12 ເດືອນຕໍ່ປີ ເລີ້ມແຕ່ເວລານັ້ນເປັນຕົ້ນໄປຈົນນິຣັນການ ອັນທີ່ສຳຄັນຂອງພຣະເຈົ້າກໍຄືເວລາບໍ່ມີຂີດຈຳກັດ ແລະການໃຫ້ກໍບໍ່ມີສິ້ນສຸດສຳລັບໄພ່ພົນຂອງພຣະເຈົ້າໃນຟ້າສວັນ.

ທ່ານມີຄວາມຕື່ນເຕັ້ນບໍ່ໃນຊີວິດຈິດວິນຍານຂອງທ່ານ ໃນເມື່ອທ່ານໄດ້ຮັບໃຊ້ພຣະເຈົ້າຕລອດໄປເປັນນິດ. ຕົ້ນໄມ້ນັ້ນໄດ້ປິ່ນປົວໃຫ້ພວກເຮົາທາງດ້ານຮ່າງກາຍແລະຈິດວິນຍານໃຫ້ສົມບູນແບບ. ບໍ່ມີເປື່ອຍເໜົ່າແລະບໍ່ຫ່ຽວແຫ້ງ (1 ເປໂຕ 1:4 ) ຄວາມບາບຂອງພວກເຮົາແມ່ນຖືກປິ່ນປົວແລ້ວດັ່ງນັ້ນພວກເຮົາຈຶ່ງມີຄວາມຊື່ນຊື່ນຍິນດີ ເພາະພຣະເຈົ້າໃຫ້ພວກເຮົາກັບຄືນດີກັບພຣະອົງ. ຕົ້ນໄມ້ແຫ່ງຊີວິດ, ເໝືອນກັບສວນເອເດນ (ປະຖົມມະການ 2:9) ເຮັດໃຫ້ພວກເຮົາຈົດຈຳໄວ້ ການຖືກຊົງໄຖ່ຂອງພຣະເຈົ້າໄດ້ໃຫ້ໂອກາດແກ່ພວກເຮົາຕລອດ. ຄວາມຊື່ນຊື່ນຍິນດີ 2 ຢ່າງຄື: <u>ນຶ່ງ</u>ຄືການຮັບໃຊ້ ແລະ<u>ສອງ</u>ແມ່ນການພົບພຣະອົງ. ການທີ່ຈະເຫັນໜ້າພຣະເຈົ້ານັ້ນແມ່ນເປັນການຊື່ນຊື່ນຍິນດີຫຼືຢ້ານກົວ? ການຮັບໃຊ້ພຣະເຈົ້າແມ່ນເປັນກຽດອັນສູງສົ່ງແລະເປັນກຽດອັນຍິ່ງໃຫຍ່ໃນໂລກນີ້ແລະມັນສາມາດເຮັດໃຫ້ເຮົາມີພະລັງຈົນໄປເຖິງແຜ່ນດິນໂລກໃໝ່ຂອງພຣະເຈົ້າ. ໜ້າເສັຽດາຍສຳລັບຜູ້ທີ່ມີຊີວິດຢູ່ໃນໂລກນີ້ແຕ່ບໍ່ໄດ້ຮັບໃຊ້ວຽກງານຂອງພຣະເຈົ້າ ເປັນບາງຄົນຕ້ອງການທີ່ຈະຮັບໃຊ້ພຣະເຈົ້າໃນຊີວິດຂອງເຂົາແຕ່ກົງກັນຂ້າມ. ບາງຄົນບໍ່ເຄີຍຄິດເລີຍວ່າຈະຮັບໃຊ້. ທີ່ຈິງແລ້ວເວລາຂອງເຮົາໃນໂລກນີ້ ເປັນການກະກຽມຂອງພວກເຮົາເພື່ອຈະໄປສວັນ, ດັ່ງນັ້ນພວກເຮົາຄວນພັດທະນາໃຫ້ເປັນຄົນທີ່ສລາດແລະມີນິສັຍດີ ເພື່ອປະກອບໃນການຮັບໃຊ້ຢູ່ໃນໂລກນີ້ ແລະໂລກໜ້າ. ທ່ານມີຄວາມແນ່ນອນໃຈບໍ່ວ່າ ທ່ານຈະໄປຢູ່ໃນແຜ່ນດິນສວັນຂອງພຣະເຈົ້າ. ຜູ້ທີ່ຮັບໃຊ້ກໍຈະໄດ້ເຫັນພຣະພັກຂອງພຣະອົງ ໃຫ້ຈິດໃຈຂອງພວກເຮົາຈຶ່ງປ່ຽນແປງດ້ວຍພຣະຄຸນແລະຄວາມຮັກຂອງພຣະເຈົ້າ. ຜູ້ທີ່ເຊື່ອນັ້ນແມ່ນເໝາະສົມໃນແຜ່ນດິນສວັນ. ພຣະເຢຊູເວົ້າວ່າ " ຜູ້ທີ່ມີຈິດໃຈບໍຣິສຸດ " ຈ ະເຫັນພຣະເຈົ້າ (ມັດທາຍ 5:8) ສຳລັບຊີວິດຂອງທ່ານໂມເຊ ລາວບໍ່ໄດ້ເຫັນພຣະພັກຂອງພຣະເຈົ້າເຫັນແຕ່ທາງດ້ານຫລັງ (ພຣະທັມອົບພະຍົບ 33:20-23) ແຕ່ວ່າໃນແຜ່ນດິນສວັນຂອງພຣະເຈົ້າ. ສຳລັບຜູ້ທີ່ເຊື່ອບໍ່ຕ້ອງການສິ່ງໃດອີກແລ້ວມີພຽງແຕ່ການນະມັສການພຣະອົງເຈົ້າທີ່ຖືກຕ້ອງໃນຊີວິດນີ້ ທ່ານໂປໂລໄດ້ເວົ້າວ່າ ໃນໂລກນີ້ພວກເຮົາເຫັນພຽງພໍມົວໆ(1ໂກລິນໂທ 13:12) ແຕ່ພວກເຮົາກໍຍັງມີຄວາມຊື່ນຊື່ນຍິນດີທີ່ໄດ້ໃກ້ຊິດກັບພຣະອົງ.

## ບົດຮຽນແຫ່ງຊີວິດ

ໃນແຜ່ນດິນສວັນຂອງພຣະເຈົ້າ ພຣະເຈົ້າຈະເປັນຜູ້ອວຍພອນເຮົາຢ່າງມະຫາສານ, ການລົງໂທດ, ຄວາມປ້ອຍ ' ດ່າຈະບໍ່ມີອີກແລ້ວ. ລູກຂອງພຣະເຈົ້າຈະເຫັນພຣະພັກຂອງພຣະອົງ ແລະຈະບົວລະບັດພຣະອົງດ້ວຍຄວາມຊື່ນຊື່ນຍິນດີ.

- ການດຳຣົງຊີວິດທີ່ຮູ້ຈັກພຣະຄຳຂອງພຣະເຈົ້າຊີວິດຂອງເຮົາກໍຈະມີການປ່ຽນແປງ ເຂົາຈະຮູ້ຈັກວ່າຄວາມທົນທຸກທໍຣະມານຢູ່ໃນໂລກນີ້ເປັນພຽງຊົ່ວຄາວເທົ່ານັ້ນ.
- ພວກເຮົາຄວນເພີ້ມພູນໃນການສ້າງຄວາມສຳພັນໃນການສາມະຄີທັມກັບພຣະເຈົ້າໃນເວລານີ້ເພື່ອຕຽມພ້ອມໃຫ້ເໝືອນກັບເວລາເຮົາຈະຢູ່ໃນແຜ່ນດິນສວັນຂອງພຣະເຈົ້າ.

- ສແວງຫາສະງ່າຣາສີຂອງພຣະເຈົ້າດ້ວຍການປະພຶດຂອງເຮົາຈະຊ່ວຍໃຫ້ເຮົາເອົາໃຈຈົດຈໍ່ເຖິງແຜ່ນດິນສວັນຂອງພຣະເຈົ້າ.
- ຖ້າວ່າພວກເຮົາຮູ້ຈັກພຣະສະງ່າຣາສີຂອງພຣະອົງໃນໂລກນີ້ເຮົາຈະມີຄວາມພູມໃຈ ໃຫ້ພວກເຮົາມີການຮ່ວມໄມ້ຮ່ວມມືກັນປະກາດຂ່າວປະເສີດຂອງພຣະອົງໄປທົ່ວໂລກ.
- ຄວາມຊົມຊື່ນຍິນດີແມ່ນການຮູ້ເຖິງການສູນເສັຽເມືອງສຸຂເສີມແລະຈະໄດ້ພົບພໍ້ອີກໃນແຜ່ນດິນສວັນ.
- ຖ້າຫາກວ່າພວກເຮົາຊອກສແວງຫາພຣະເຈົ້າແລະພົບກັບພຣະອົງ ພວກເຮົາກໍແນ່ນອນໃຈວ່າຈະໄດ້ພົບພຣະເຈົ້າໃນແຜ່ນດິນສວັນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປແລະຮຽບຮຽງໂດຍ ss/mk